ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 2:
## Overview of Lao Traditional Literature (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 1:** ວັນນະຄະດີພື້ນເມືອງໂດຍສັງເຂບ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ວັນນະຄະດີພື້ນເມືອງທີ່ມີເນື້ອໃນຕິດພັນກັບບຣິດຄອງປະເພນີ ແລະ ຄວາມເຊື່ອຖືຂອງຄົນລາວ<br>- ການຈັດແບ່ງປະເພດຂອງວັນນະຄະດີພື້ນເມືອງ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ເນື້ອໃນວັນນະຄະດີພື້ນເມືອງລາວ<br>- ເນື້ອໃນວັນນະຄະດີພື້ນເມືອງຕິດພັນກັບຮີດຄອງປະເພນີ ແລະຄວາມເຊື່ອ<br>- ການຈັດແບ່ງປະເພດວັນນະຄະດີພື້ນເມືອງລາວ | **ຄຳຖາມຫຼັກ (Questions):**<br>1) ວັນນະຄະດີພື້ນເມືອງລາວ ມີເນື້ອໃນຫຍັງແດ່?<br>2) ເນື້ອໃນວັນນະຄະດີພື້ນເມືອງຕິດພັນກັບຮີດຄອງປະເພນີ ແລະຄວາມເຊື່ອ ເປັນແນວໃດ?<br>3) ວັນນະຄະດີພື້ນເມືອງລາວແບ່ງອອກເປັນຈັກປະເພດ? ຄືປະເພດໃດແດ່? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນຂອງວັນນະຄະດີພື້ນເມືອງລາວ ແລະ ການຈັດແບ່ງປະເພດຂອງວັນນະຄະດີພື້ນເມືອງລາວ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງ ເນື້ອໃນຂອງວັນນະຄະດີພື້ນເມືອງລາວ ແລະ ການຈັດແບ່ງປະເພດຂອງວັນນະຄະດີພື້ນເມືອງລາວ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |

- **ສື່ການສອນມີ:**

ປື້ມຕໍາລາວິຊາວັນນະຄະດີພື້ນເມືອງລາວ, ປື້ມວັນນະຄະດີລາວ, ປື້ມວັນນະຄະດີພື້ນເມືອງລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກໍາ.

- **ກິດຈະກໍາການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**

- ຄູນໍາພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງຄວາມໝາຍ ແລະຄວາມສໍາຄັນຂອງວັນນະຄະດີພື້ນເມືອງລາວ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 1**
**ວັນນະຄະດີພື້ນເມືອງໂດຍສັງເຂບ (ຕໍ່)**

**3. ເນື້ອໃນວັນນະຄະດີພື້ນເມືອງລາວ**

**3.1 ເນື້ອໃນວັນນະຄະດີພື້ນເມືອງລາວ** (25 ນາທີ)

**ກິດຈະກໍາ 1:**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປື້ມຕໍາລາ

1) ວັນນະຄະດີພື້ນເມືອງລາວມີເນື້ອໃນເວົ້າເຖິງຫຍັງແດ່?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (10 ນາທີ)

ວັນນະຄະດີພື້ນເມືອງອະທິບາຍປາກົດການຕ່າງໆຂອງທໍາມະຊາດ ແລະ ສັງຄົມ. ເນື້ອໃນຕົ້ນຕໍຂອງເທບນິຍາຍຈຶ່ງສ່ອງແສງເຖິງແນວຄິດ, ວິທີການອະທິບາຍໂລກພະວະວິໄສຂອງຄົນໃນສະໄໝນັ້ນ. ການດໍາລົງຊີວິດ ແລະ ຄວາມມຸ່ງມາດປາຖະໜາຂອງຄົນບູຮານ.

ຖັດຈາກເທບນິຍາຍມາ ກໍ່ແມ່ນປະເພດພື້ນສືບເຊິ່ງເລີ່ມເກີດຂຶ້ນແຕ່ໄລຍະທ້າຍຂອງລະບອບປະຖົມບູຮານຕໍ່ໃສ່ລະບອບສັງຄົມທີ່ມີການພັນແຍກຊົນຊັ້ນ. ພື້ນສືບຂອງລາວເຮົາເກີດຂຶ້ນເມື່ອບັນດາເຜົ່າເລີ່ມມີສະຕິເປັນເຈົ້າຈຸ້ມເຈື້ອເຊື້ອສາຍ ແລະ ຊົນເຜົ່າຂອງຕົນເຊິ່ງຕິດພັນກັບພາລະກິດກໍ່ຕັ້ງບັນດາເມືອງບູຮານຂອງລາວເຊັ່ນ: ພື້ນສີໂຄດຕະບອງ, ພື້ນຈັນທະພານິດ, ພື້ນຂຸນບູລົມ, ພື້ນຂຸນເຈືອງ ແລະ ຕໍານານຫຼວງພະບາງ, ຕໍານານເມືອງວຽງຈັນ, ຕໍານານພະບາງຕ່າງໆ. ເຫດການ ແລະ ຕົວລະຄອນໃນພື້ນສືບເຄີຍຕິດພັນກັບເຫດການ ແລະ ບຸກຄົນປະຫວັດສາດ. ເນື້ອໃນຕົ້ນຕໍຂອງພື້ນສືບແມ່ນບັນຫາປະຫວັດສາດ ແລະ ຕົວຈິງສັງຄົມ. ສະນັ້ນ, ຈຶ່ງມີຄວາມສໍາຄັນສໍາລັບການຄົ້ນຄວ້າປະຫວັດສາດຂອງຊາດ, ພື້ນສືບຍັງຄົງສືບຕໍ່ຂະຫຍາຍຕົວມາຈົນເຖິງທຸກວັນນີ້.

ສັງຄົມມີການຂະຫຍາຍຕົວຈາກການດໍາລົງຊີວິດແບບລວມໝູ່ໄປຫາການດໍາລົງຊີວິດເອກະເທດເປັນແຕ່ລະຄອບຄົວ, ຜູ້ຮັ່ງ ແລະ ຜູ້ທຸກ, ມີການກົດຂີ່ກັນ. ນີ້ແມ່ນເງື່ອນໄຂດ້ານສັງຄົມທີ່ພາໃຫ້ເກີດມີເລື່ອງເລົ່າທີ່ມີເນື້ອໃນຕໍ່ສູ້

ດ້ານສັງຄົມຄື: ນິທານອັດສະຈັນ, ນິທານຊວນຫົວ ແລະ ນິທານສັດ. ການຕໍ່ສູ້ຊົນຊັ້ນໄດ້ສະແດງອອກດ້ວຍຫຼາຍຮູບຫຼາຍແບບຕ່າງກັນ. ໂດຍທາງກົງ ແລະ ທາງອ້ອມບົດສິລະປະວັນນະຄະດີຕ່າງໆທີ່ປະຊາຊົນຜູ້ອອກແຮງງານໄດ້ປະດິດແຕ່ງຂຶ້ນໃນໄລຍະນີ້ໄດ້ກາຍເປັນອາວຸດອັນແຫຼມຄົມຮັບໃຊ້ການຕໍ່ສູ້ຂອງເຂົາຕ້ານການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງໂດຍສະເພາະແມ່ນຊົນຊັ້ນສັກດິນາ. ບົດນິທານຕ່າງໆມີເນື້ອໃນສ່ອງແສງຄວາມເປັນຈິງຂອງສັງຄົມທີ່ມີຊົນຊັ້ນຢ່າງຮອບດ້ານ ແລະ ເລິກເຊິ່ງແຕ່ພັດແກ້ໄຂຄວາມຄັດແຍ້ງຕົວຈິງນັ້ນໂດຍຮູບການເຫຼືອເຊື່ອເພີນຈິດ ແລະ ມະຫັດສະຈັນທີ່ສຸດ. ເອົາການສະແດງທາງຈິດໃຈເພື່ອພິສູດຢັ້ງຢືນບັນຫາ ສິນທຳຕ້ອງເອົາຊະນະອະທຳ.

ນິທານສັດແມ່ນຮູບການປະດິດແຕ່ງພື້ນເມືອງແບບພິເສດປະເພດໜຶ່ງທີ່ມີລັກສະນະຕໍ່ສູ້ສັງຄົມສູງໂດຍຍົກເອົາເລື່ອງສັດມາເວົ້າເລື່ອງຄົນເພື່ອໂຈມຕີຊົນຊັ້ນປົກຄອງໂດຍທາງອ້ອມນັ້ນກໍ່ໄດ້ກຳເນີດ ແລະ ຂະຫຍາຍ ຕົວພ້ອມໆກັບນິທານອັດສະຈັນ. ຮອດໄລຍະສຸດທ້າຍຂອງລະບອບສັງຄົມສັກດິນາເຊິ່ງເລີ່ມຕົ້ນເປື່ອຍເຍື່ອຍເນົ່າ ເໜັນ ແລະ ຊຸດໂຊມລົງຊັກໄຊ້ໃນສັງຄົມໄດ້ເກີດມີຂໍ້ຂັດແຍ່ງຫຼາຍຢ່າງລະຫວ່າງເນື້ອໃນທາດແທ້ອັນຊຸດໂຊມກັບຮູບນອກທີ່ເບິ່ງຊົງຄືຍັງເຂັ້ມແຂງ. ຍ້ອນຄວາມພະຍາຍາມຂອງຊົນຊັ້ນສັກດິນາທີ່ຢາກຕາບຈູນຈ່ອງດຶງ ແລະ ໜ່ວງໜ່ຽວເອົາລະບອບສັງຄົມອ່ອນເພຍເປ້ຍລ່ອຍຂອງເຂົາເຈົ້າໄວ້.

ປະຊາຊົນໄດ້ຈັບເອົາໂອກາດນີ້ປະດິດແຕ່ງນິທານຊວນຫົວຂຶ້ນເພື່ອເຢາະເຢີ້ຍ, ສຽດສີ, ກ່າວປະນາມ ແລະ ໂຈມຕີຊົນຊັ້ນປົກຄອງ, ໂຈມຕີລະບອບສັກດິນາທີ່ກຳລັງຄອນແຄນ ແລະ ກຳລັງຈະລົ້ມໄປແລ້ວນັ້ນ. ສະນັ້ນ, ຈຶ່ງອາດເວົ້າໄດ້ວ່ານິທານຊວນຫົວຂະຫຍາຍຕົວແຮງໃນທ້າຍລະບອບສັກດິນາ ແລະ ກາຍເປັນອາວຸດແຫຼມຄົມຂອງປະຊາຊົນຕໍ່ສູ້ຕ້ານຊົນຊັ້ນສັກດິນາເຊັ່ນ: ເລື່ອງຊຽງໝ້ຽງ, ເລື່ອງທ້າວໂປ້ເຫຼົ່ານີ້ເປັນຕົ້ນ.

ລວມຄວາມວ່າເລື່ອງເລົ່າພື້ນເມືອງປະເພດຕ່າງໆທີ່ກ່າວມານັ້ນເຄີຍມີການພົວພັນສິ່ງຜົນສະທ້ອນ ແລະ ສືບທອດເຊິ່ງກັນ ແລະກັນ ນິທານສັດສ່ວນຫຼາຍໄດ້ເກີດຂຶ້ນໃນສັງຄົມທີ່ມີຊົນຊັ້ນ ແລະ ມີການເຊື່ອຖືງົມງວາຍ. ດັ່ງນັ້ນມັນຍ່ອມຮັບຜົນສະທ້ອນຈາກລະບົບແນວຄິດຂອງຊົນຊັ້ນປົກຄອງ ແລະ ລະບົບແນວຄິດຂອງສາດສະໜາຕ່າງໆໂດຍສະເພາະແມ່ນສາສະໜພຸດແຕ່ເບິ່ງເລິກເຂົ້າໄປແລ້ວເນື້ອໃນຕົ້ນຕໍ ແລະ ພື້ນຖານຂອງບົດເລື່ອງແມ່ນສ່ອງແສງການດຳລົງຊີວິດ ແລະ ການຕໍ່ສູ້ລະຫວ່າງຊົນຊັ້ນຄວາມມຸ່ງມາດປາຖະໜາຂອງຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າທີ່ຢາກມີຊີວິດໃໝ່ອັນສຸກສັນຢູ່ໃນສັງຄົມອັນເປັນທຳຢ່າງແທ້ຈິງ (ພູວົງ ໜໍ່ດາລາ ແລະຄະນະ, 2018).

ວັນນະຄະດີພື້ນເມືອງສ່ອງແສງເຖິງ ຄວາມອຸດົມຮັ່ງມີ ແລະສວຍງາມຂອງປະເທດຊາດບ້ານເມືອງ, ເວົ້າເຖິງທັດສະນະຄຸນສົມບັດ ແລະຮີດຄອງປະເພນີຂອງປະຊາຊົນ, ສ່ອງແສງເຖິງຄວາມຮູ້ຄວາມສາມາດອັນແຫຼມຄົມ ແລະ ກຳລັງວັງຊາອັນແຮງກ້າຂອງປະຊາຊົນ. ນອກຈາກນັ້ນ, ວັນນະຄະດີພື້ນເມືອງຍັງສະແດງເຖິງໂລກະທັດ, ຄວາມມຸ່ງມາດປາດຖະໜາ, ຈິດຕະສາດ ແລະແນວຄິດຈິດໃຈຂອງປະຊາຊົນອີກດ້ວຍ (ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

ວັນນະຄະດີພື້ນເມືອງ ສ່ອງແສງການຕໍ່ສູ້ຕ້ານໄພທຳມະຊາດ, ຕໍ່ສູ້ສັງຄົມ ແລະອຸດົມສົມບູນທີ່ສຸດ. ນອກຈາກນັ້ນ, ຍັງສະແດງເຖິງແນວຄິດຈິໃຈ ແລະຄວາມມຸ່ງມາດປາດຖະໜາ ອັນມີລັກສະນະປະຊາທິປະໄຕຂອງປະຊາຊົນຜູ້ອອກແຮງງານ, ສ່ອງແສງເຖິງການຕໍ່ຂອງປະຊາຊົນຕ້ານການຖູດຮີດຂອງຊົນຊັ້ນປົກຄອງ. ພ້ອມກັນນັ້ນວັນນະຄະດີພື້ນເມືອງກໍຍັງຮັບເອົາຜົນສະທ້ອນໃນລະດັບໃດໜຶ່ງມາຈາກ ລະບົບແນວຄິດຂອງຊົ້ນຊັ້ນປົກຄອງອີກດ້ວຍ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987)

**3.2 ເນື້ອໃນວັນນະຄະດີພື້ນເມືອງຕິດພັນກັບຮີດຄອງປະເພນີ ແລະຄວາມເຊື່ອ** (20 ນາທີ)

**ກິດຈະກໍາ 2:**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ

  1) ວັນນະຄະດີພື້ນເມືອງລາວຕິດພັນກັບຮີດຄອງປະເພດນີ ແລະຄວາມເຊື່ອຖືຂອງຄົນລາວແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບປິດຮຽນກິດຈະກໍາ: (15 ນາທີ)

ວັນນະຄະດີພື້ນເມືອງອຸດົມຮັ່ງມີທີ່ສຸດ, ມັນກໍາເນີດບົນພື້ນການການດໍາລົງຊີວິດທາງສັງຄົມຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າ. ດັ່ງນັ້ນ, ຈຶ່ງມີລັກສະນະຊາດ ແລະລັກສະນະທ້ອງຖິ່ນຢ່າງຈະແຈ້ງ. ວັນນະຄະດີພື້ນເມືອງຂອງບັນດາເຜົ່າໄທລາວສະແດງເຖິງອາດການດໍາລົງຊີວິດຂອງຄົນທີ່ມີລະດັບເສດຖະກິດ ແລະສັງຄົມຂະຫຍາຍຕົວ, ຕິດພັນຢ່າງຊະນິດແໜ້ນກັບການເຄື່ອນໄຫວອວຽກງານຂອງຊາວນາ ແລະການດໍາລົງຊີວິດຢູ່ເຂດທົ່ງພຽງ ລຽບຕາມແຄມແມ່ນໍ້າລໍາເຊ.

ບັນດາເຜົ່າໃນໝວດພາສາມອນ-ຂະແມ ທີ່ເຄີຍທໍາມາຫາກິນບົນຜືນແຜ່ນດິນແຫ່ງນີ້ແຕ່ສະໄໝດຶກດໍາບັນມາດ້ວຍອາຊີບເຮັດໄຮ່ເຮັດສວນນັ້ນ ກໍມີພື້ນຖານວັດທະນະທໍາພື້ນເມືອງອັນເກົ່າແກ່ ແລະອຸດົມສົມບູນ ເຊິ່ງຍັງຮັກສາລັກສະນະ ແລະບັນຍາກາດອັນຟົດຟື້ນທີ່ຕິດພັນກັບຮ່ອງຮອຍວັດທະນະທໍາສະໄໝບູຮານ. ບັນດາເຜົ່າໃນໝວດພາສາມົ້ງ-ຢ້າວ ແລະຊົນເຜົ່າອື່ນໆທີ່ເຂົ້າມາຢູ່ດິນລາວຕາມທີຫຼັງນັ້ນ ຕ່າງກໍໄດ້ນໍາເອົາວັດທະນະທໍາ ວັນນະຄະດີພື້ນເມືອງອັນມີລັກສະນະສັງຄົມແບບຊົນເຜົ່າ, ໂດດວິງຍັງໜາແໜ້ນສົມຄວນຂອງຕົນ ທັງປະກອບເຂົ້າໃນຄັງສາງວັນນະຄະດີພື້ນເມືອງຂອງຊາດ. ເຮັດໃຫ້ມັນມີລັກສະນະລວທັງຊາດ ແລະມີທັງສີສັນສະເພາະຂອງແຕ່ລະເຜົ່າ, ແຕ່ລະທ້ອງຖິ່ນຢ່າງຈະແຈ້ງ ແລະເລິກເຊິ່ງ.

ວັນນະຄະດີພື້ນເມືອງຂອງລາວເຮົາ ເຄີຍຕິດແໜ້ນກັບການດໍາລົງຊີວິດຕົວຈິງຂອງປະຊາຊົນບັນດາເຜົ່າ. ພິເສດແມ່ນການເຮັດບຸນສົນກິນທານ, ຮີດຄອງປະເພນີ ແລະຖານເຊື່ອຖືອື່ນໆ. ຮີດຄອງປະເພນີອັນເກົ່າແກ່ ແລະດີງາມເຫຼົ່ານັ້ນ, ເຄີຍມີເນື້ອໃນດ້ານການອອກແຮງງານເພີ່ມພູນຜະລິດຜົນທັງມີຄວາມໝາຍປຸກລະດົມຈິດໃຈ ແລະເປັນເງື່ອນໄຂອັນສະດວກດີໃຫ້ແກ່ການກໍາເນີດ. ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ. ໃນດ້ານຮູບການສະແດງວັນນະຄະດີພື້ນເມືອງຂອງລາວເຮົາເຄີຍຕິດພັນກັບສິລະປະຂອງການຟ້ອນລໍາ, ການເສບແບບພື້ນເມືອງທີ່ມີລັກສະນະມວນຊົນຄື ລໍາວົງ, ລໍາເລື່ອງ ປະສານສຽງຄ້ອງ, ສຽງກອງອັນຫ້າວຫັນຈັບໃຈພ້ອມກັບຈັງຫວະແຄນທີ່ມີບາດຂຶ້ນ, ບາດລົງຢ່າງເຊາະໄສເຂັ້ມແຂງ, ເຮັດໃຫ້ບັນຍາກາດຟົດຟື້ນ ຄຶກຄື້ນເປັນພິເສດຕ່າງກັນກັບການສະແດງພື້ນເມືອງຂອງຊາດອື່ນໆ, ຈຸດພິເສດຂອງການສະແດງດັ່ງກ່າວມານັ້ນກໍມີສ່ວນກໍານົດລະດັບການກໍາເນີດ ແລະຂະຫຍາຍຕົວຂອງວັນນະຄະດີພື້ນເມືອງແຕ່ລະປະເພດ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).

ວັນນະຄະດີພື້ນເມືອງຂອງຊາດລາວເຮົາເຄີຍຕິດພັນແໜ້ນກັບການດໍາລົງຊີວິດຕົວຈິງຂອງປະຊາຊົນບັນດາເຜົ່າ, ພິເສດ ແມ່ນການເຮັດບຸນກິນທານ, ຮີດຄອງປະເພນີ ແລະການເຊື່ອຖືອື່ນໆ. ຮີດຄອງປະເພນີອັນເກົ່າແກ່ ແລະດີງາມເຫຼົ່ານັ້ນເຄີຍມີເນື້ອໃນດ້ານການເພີ່ມພູນຜະລິດຜົນ, ທັງມີຄວາມໝາຍປຸກລະດົມຈິດໃຈ ແລະເປັນເງື່ອໄຂອັນສະດວກດີໃຫ້ແກ່ການກໍາເນີດ, ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ.

ວັນນະຄະດີະເພດຄໍາກອນ ບໍ່ສະເພາະແຕ່ມີບົດບາດສໍາຄັນໃນການຂັບລໍາເທົ່ານັ້ນ, ຫາກຍັງມີຄວາມໝາຍອັນໃຫຍ່ຫຼວງໃນການດໍາລົງຊີວິດຕົວຈິງຂອງປະຊາຊົນອີກ ຄ້ເຍຄືການອອກແຮງງານ, ການເຮັດບຸນສົນກິນທານ ແລະການເຊື່ອຖືຕາມຮີດຄອງປະເພນີຕ່າງໆ (ບໍ່ແສງຄໍາ ວົງດາລາ ແລະຄະນະ, 1987).

**4. ການຈັດແບ່ງປະເພດວັນນະຄະດີພື້ນເມືອງລາວ** (15 ນາທີ)

**<u>ກິດຈະກຳ 3:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ວັນນະຄະດີພື້ນເມືອງລາວແບ່ງອອກເປັນຈັກປະເພດ? ຄືປະເພດໃດແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ການແບ່ງປະເພດຂອງວັນນະຄະດີ ແມ່ນຂຶ້ນກັບຜູ້ແບ່ງວ່າຈະເອົາສິ່ງໃດມາເປັນເກນ. ຖ້າແບ່ງຕາມຮູບແບບການແຕ່ງກໍມີ 2 ປະເພດຄື ຮ້ອຍກອງ ແລະ ຮ້ອຍແກ້ວ; ຖ້າແບ່ງຕາມເນື້ອໃນກໍອາດຈະແບ່ງເປັນ 2 ປະເພດໄດ້ຄືກັນຄື ສາລະຄະດີ ແລະ ບັນເທີງ; ຖ້າແບ່ງຕາມລັກສະນະຂອງເນື້ອໃນເລື່ອງ, ຄຳບັນຍາຍ, ຖ້ອຍຄຳສົນທະນາ ແລະ ອື່ນໆ. ເມື່ອຜູ້ອ່ານໆ ແລ້ວກໍຈະໄດ້ຮັບຄະຕິ ແລະ ຂໍ້ຄິດເຫັນທີ່ດີງາມໂດຍຮູ້ສຶກ ແລະ ບໍ່ຮູ້ສຶກຕົວເຊັ່ນ: ຈາກເລື່ອງຕ່າງໆໃນວັນນະຄະດີສາສະໜາ, ນິທານ, ນິຍາຍ, ຄຳສຸພາສິດ, ກອນຜະຫຍາ...

ວັນນະຄະດີຖ້າແບ່ງຕາມລັກສະນະຂອງວັນນະຄະດີກໍອາດຈະແບ່ງເປັນ 3 ປະເພດຄື ຮ້ອຍແກ້ວ, ຮ້ອຍກອງ ແລະ ລະຄອນ. ໃນທີ່ນີ້ຈະຂໍອະທິບາຍພຽງແຕ່ການແບ່ງຕາມລັກສະນະເທົ່ານັ້ນ.

ວັນນະຄະດີປະເພດຮ້ອຍກອງ (ກາບກອນ) ແມ່ນໜັງສືທີ່ມີລັກສະນະບັງຄັບໃນການແຕ່ງຕາມຫຼັກຂອງສັນທະກະວີ ຫຼື ມີການກຳນົດຈຳນວນຄຳ, ການສຳຜັດ ແລະ ອື່ນໆໄວ້ແນ່ນອນຂໍ້ກຳນົດເຫຼົ່ານີ້ມີຢູ່ໃນບົດກາບກອນຫຼາຍ ຫຼື ໜ້ອຍຕ່າງກັນອັນພາໃຫ້ມີການຈຳແນກປະເພດຂອງກາບກອນອີກເຊັ່ນ: ໂຄງ, ສານ, ກາບ, ກອນ ແລະ ອື່ນໆ.

ວັນນະຄະດີປະເພດຄຳຮ້ອຍແກ້ວ ແມ່ນການຂຽນຂໍ້ຄວາມ ຫຼື ເລື່ອງທີ່ບໍ່ໄດ້ກຳນົດຈຳນວນຄຳໃນແຕ່ລະວັກ ແລະ ບໍ່ບັງຄັບໃນດ້ານການສຳຜັດ. ວັນນະຄະດີຄຳຮ້ອຍແກ້ວອາດແບ່ງເປັນຄວາມບັນເທີງຄະດີ ແລະ ສາລະຄະດີ.

ບັນເທີງຄະດີ ໄດ້ແກ່ເລື່ອງທີ່ສົມມຸດແຕ່ງຂຶ້ນ ແຕ່ມີເຄົ້າຄວາມຈິງ ຫຼື ຄ້າຍຄວາມເປັນຈິງແບ່ງອອກເປັນນິທານ, ນະວະນິຍາຍ, ນະວະນິຍາຍສັ້ນ ແລະ ເລື່ອງສັ້ນ.

ສາລະຄະດີຄື ເລື່ອງທີ່ຂຽນເປັນສາລະໃຫ້ຄວາມຮູ້ກ່າວເຖິງຄວາມຈິງ ຫຼື ຫຼັກຖານທີ່ເປັນຈິງ ແລະ ມີຈິງພ້ອມທັງໃຫ້ຄວາມເພີດເພີນໃນການອ່ານອີກດ້ວຍ. ເລື່ອງທີ່ຂຽນເປັນສາລະຄະດີມີດັ່ງນີ້:

1). ປຶ້ມວິຊາການ, ຕຳລາວິຊາຕ່າງໆເຊັ່ນ: ປະຫວັດສາດ, ວິທະຍາສາດເປັນຕົ້ນ.

2). ຊີວະປະຫວັດ.

3). ບັນທຶກການເດີນທາງທ່ອງທ່ຽວ.

4). ເລື່ອງກ່ຽວກັບຄວາມຄິດເຫັນຢ່າງມີຫຼັກຖານວິຊາການ ຫຼື ຂໍ້ເທັດຈິງທີ່ໜ້າສົນໃຈໄດ້ແກ່ບົດຄວາມ, ບົດວິຈານ, ອະທິບາຍ, ບົດພິສູດເປັນຕົ້ນ.

ບົດລະຄອນ ແມ່ນເລື່ອງທີ່ແຕ່ງຂຶ້ນ ເພື່ອສະແດງບົນເວທີ. ຮູບແບບຂອງບົດລະຄອນປະກອບດ້ວຍ 1) ບົດລະຄອນລຳເຊັ່ນ: ລຳເລື່ອງສິນໄຊ, ລຳເລື່ອງແຕງອ່ອນເປັນຕົ້ນ; 2). ບົດລະຄອນແບບເອີລົບໄດ້ແກ່ບົດລະຄອນເວົ້າເປັນຕົ້ນເຊັ່ນ: ເລື່ອງຫອມກິ່ນບົວແດງ ແລະ ອື່ນໆ(ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເນື້ອໃນວັນນະຄະດີພື້ນເມືອງລາວ
  - ເນື້ອໃນວັນນະຄະດີພື້ນເມືອງຕິດພັນກັບຮີດຄອງປະເພນີ ແລະຄວາມເຊື່ອ
  - ການຈັດແບ່ງປະເພດວັນນະຄະດີພື້ນເມືອງລາວ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ອ່ອນແກ້ວ ນວນນະວົງ ແລະຄະນະ. (2008). ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາ ປີທີ ສີ່. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ກຽງແກ້ວ ນວນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1. ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ

ບໍ່ແສງຄຳ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ